# ຂອບໃຈສາວຫລັກເຈັດ

ໂດຍ: ກຸຫຼາບຂາວ

ແນວວ່າຄຳກອນນີ້ ມັນສຸດຍາກເຫລືອທີ່
ຜູ້ເພິ່ນມີສະຕິ ປັນຍາຈຶ່ງແຕ່ງໄດ້
ຂໍອະພັຍນຳນ້ອງ ສິພັນດອນສາວຊາ່
ລືຊາໄກເລີດລ້ຳ ປັນຍານ້ອງເລີດປະການ

ຖ້າວ່າກອນອ່ານນີ້ ຕົກຂາດບັ້ນຕອນ
ຂໍນ້ອງດອນອະໂຫສີ ຜູ້ມີປັນຍານ້ອຍ
ຈະຂໍໄຂຄຳຖ້ອຍ ສີພັນດອນຖາມຂ່າວ
ທາວເຖິງເອື້ອຍແລະອ້າຍ ໂຕຣົງໂຕພີ້ເພື່ອນສະຫາຍ

ເພິ່ນໄດ້ອະທິບາຍບອກຊີ້ ວິທີແບ່ງວຽກງານ
ໃຫ້ນຳຕາມຄຳເຫັນ ຜູ້ມີປະສົບແລ້ວ
ແນວໃດມີຂັດຂ້ອງ ຖາມມາຈະແຮງຊ່ອຍ
ຂໍຂອບໃຈລວ່ງໜ້າ ຄຳແພງເຈົ້າຜູ້ຄິດນຳ

ໃຫ້ຈົດຈຳສົມສັກໄວ້ ໃຈໃຫ່ຽກະເປົ໋າໜັກ ແທ້ດາຍ
ຢ້ານດອນກາຍມາຖະແລງລົມ ຕົມບໍ່ມີໃຫ້ສັກໜື່ນ

ດອນມີຄົນອື່ນຢູ່ແລ້ວ ຢ່າຄຸມໃຫ້ໝື່ນຕົມທ້ອນ ນ້ອງດອນ

ຄິດນຳເດຄິດນຳຊາຍຈະຕົກສ້າງ ດອນບໍ່ເອົາເກີນໄປກ່າຍ

ໃຫ້ສັກຕາຍຄ້າງຢ້າງ ໃນສ້າງຢູ່ຜູ້ດຽວຊັ້ນບໍ ນ້ອງດອນເອີຍ